**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດທີ 27 ພຶສຈິກາ 2016 (11-27-2016)**

# ເຖິງຢ່າງໃດກໍຂອບພຣະຄຸນ

**ຈຸດສຳຄັນຂອງບົດຮຽນ**: ພວກເຮົາສາມາດຂອບພຣະຄຸນພຣະເຈົ້າໄດ້ໃນທຸກໆສະຖານະການ.

ພຣະຄັມພີໃນບົດຮຽນ:  2 ຂ່າວຄາວ 20:10-12, 14-17, 20-22, 29-30

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ໃນບາງມື້ກໍເປັນການຍາກທີ່ຈະອ່ານຂ່າວຫຼືເບິ່ງຂ່າວ.

- ລະເບີດຜູ້ກໍ່ການຮ້າຍໄດ້ສັງຫານ 20 ຊີວິດ ແລະບາດເຈັບອີກຈຳນວນຫລາຍໂຫລ.
- ບໍຣິສັດຢຸດຈ້າງຄົນງານຫລາຍພັນຄົນ, ໂດຍແຈ້ງວ່າຜລິດຜົນທັງໝົດຈະຢູ່ໃນຕ່າງປະເທດ.
- ອຸປະຕິເຫດຣົດຕຳກັນຫລາຍຄັນ ໄດ້ປິດຖນົນເປັນເວລາເຖິງຫົກຊົ່ວໂມງ.

ເພາະດ້ວຍຄວາມຈິງເຫຼົ່ານີ້ເອງ, ຈຶ່ງເປັນຄວາມຫຍຸ້ງຍາກໃນການສື່ສັມພັນຕໍ່ຄຳສັ່ງຂອງໂປໂລສຳລັບພວກເຮົາໃນການ “ຂອບພຣະຄຸນໃນທຸກສິ່ງ” (1 ເທຊະໂລນິກ 5: 18).

ຂອບພຣະຄຸນ "ໃນທຸກໆ ສິ່ງ" ແມ່ນບໍ? ເປັນໄປໄດ້ບໍເມື່ອຫລາຍສິ່ງທີ່ບໍ່ດີເກີດຂຶ້ນ ທັງຢູ່ຮອບໂລກແລະໃນຊີວິດຂອງເຮົາ? ຂອບພຣະຄຸນສເມີ, ຄຳຕອບນັ້ນກໍຄື ແມ່ນແລ້ວ, ແລະພຣະຄັມພີກໍບອກເຮົາວ່າຈະຂອບພຣະຄຸນຢ່າງໃດ.

ໃນລະຫວ່າງການປົກຄອງຂອງກະສັດເຢໂຮຊາຟັດໃນຢູດາ, ຄັ້ງນຶ່ງປະຊາກອນຂອງພຣະເຈົ້າໄດ້ປະເຊີນກັບບັນຫາຄວາມຫຍຸ້ງຍາກ. ເຖິງປານນັ້ນເຂົາເຈົ້າຍັງພົບທາງທີ່ຈະຂອບພຣະຄຸນພຣະເຈົ້າ ແລະດັ່ງນັ້ນພວກເຮົາສາມາດເຮັດໄດ້ຄືກັນ.

## ສຶກສາພຣະຄັມພີ

**<u>ໂອ້ລົມສົນທະນາ</u>**: ແລກປ່ຽນຄວາມຄິດເຫັນໃນຄຳຖາມທີ່ວ່າ," **ໃນທາງໃດທີ່ທ່ານມັກສະແດງອອກໃນການຂອບພຣະຄຸນ?"**

**<u>ນຳພາ</u>**:  ນຳພານັກຮຽນເພື່ອສຶກສາເບິ່ງ **"ພຣະຄັມພີຕອບສນອງຕໍ່ຊີວິດ"** ໂດຍເນັ້ນໜັກໃສ່ **"ຈົ່ງຂອບພຣະຄຸນ"** ໂດຍອ່ານຫລືເວົ້າສລຸບຖ້ອຍຄຳໃນຕອນນີ້ຫລືໜູນໃຈໃຫ້ນັກຮຽນອ່ານດ້ວຍຕົນເອງ.

**<u>ນຳພາ</u>**: ຄຣູເວົ້າລົ້ມຄືນ **"ຈຸດສຳຄັນ"** ຢູ່ຂ້າງເທິງໜ້າທຳອິດທີ່ວ່າ, "ພວກເຮົາສາມາດຂອບພຣະຄຸນພຣະເຈົ້າໄດ້ໃນທຸກໆສະຖານະການ."

### 1. <u>2 ຂ່າວຄາວ 20:10-12</u>:

**ອ່ານພຣະຄຳ**: ໃຫ້ນັກຮຽນຄົນນຶ່ງອາສາສມັກອ່ານພຣະທັມ 2 ຂ່າວຄາວ 20:10-12

**ນຳພາ**: ນຳພານັກຮຽນໃຫ້ຄົນນຶ່ງອາສາອ່ານຖ້ອຍຄຳຂ້າງລຸ່ມນີ້, ຄຣູເວົ້າສລູບອີກໜ້ອຍນຶ່ງ;;

ເຖິງຈະເປັນບາດກ້າວທີ່ດີ, ເຢໂຮຊາຟັດຍັງຄົງປະເຊີນກັບການຕໍ່ສູ້ຈາກສັດຕຣູ. ແທ້ຈິງແລ້ວ, ເພື່ອນບ້ານຂອງເຢໂຮຊາຟັດ ຄືຊົນຊາດທີ່ອ້ອມຮອບຢູດາຍໄດ້ຮວມກຳລັງຂອງເຂົາ ເພື່ອຕຽມຕໍ່ສູ້ແລະທຳລາຍໄພ່ພົນຂອງພຣະເຈົ້າ. ເມື່ອເຢໂຮຊາຟັດຮູ້ຈັກແຜນການຂອງເຂົາ, ເພິ່ນກໍໄດ້ຮຽກເອີ້ນຄົນທັງຊາດໃຫ້ພາກັນອະທິຖານ.

**ໂອ້ລົມສົນທະນາ**: ແລກປ່ຽນຄວາມຄິດເຫັນໃນຄຳຖາມທີ່ວ່າ ***"ໃນບາງສະຖານະການ ແມ່ນຫຍັງທີ່ເຮັດໃຫ້ທ່ານອ່ອນກຳລັງ?"***

## 2. 2 ຂ່າວຄາວ 20:14-17:

**ອ່ານພຣະຄຳ**: ໃຫ້ນັກຮຽນຄົນນຶ່ງອາສາສມັກອ່ານພຣະທັມ 2 ຂ່າວຄາວ 20:14-17

**ນຳພາ**: ນຳພານັກຮຽນສຶກສາຖ້ອຍຄຳແຕ່ລະຕອນຂ້າງລຸ່ມນີ້ ໃຫ້ຄົນນຶ່ງອາສາອ່ານດັງໆ;

- ເພິ່ນຊອກຫາທາງໃຫ້ຄົນໃນປະເທດຫັນກັບມານະມັສການພຣະຢາເວ ( 1 ກະສັດ 22:46, 2 ຂ່າວຄາວ 17: 6; 19: 3)
- ເພິ່ນສົ່ງຄົນເລວີແລະປະໂຣຫິດໄປທົ່ວເມືອງຢູດາຍ, ເພື່ອສິດສອນປະຊາຊົນຈາກ " ໜັງສືພຣະບັນຍັດຂອງອົງພຣະຜູ້ເປັນເຈົ້າ ( 2 ຂ່າວຄາວ 17: 7- 9).
- ເພິ່ນປະຕິຮູບກ່ຽວກັບຣະບົບສານໃໝ່, ການຕັດສິນຄະດີຢ່າງຖືກຕ້ອງແລະຍຸດຕິທັມໃນການປົກຄອງ. ຈື່ໄວ້ໃນໃຈຂອງເຂົາວ່າ " ບໍ່ໄດ້ພິພາກສາເພື່ອມະນຸດແຕ່ເພື່ອອົງພຣະຜູ້ເປັນເຈົ້າ" ( 2 ຂ່າວຄາວ 19: 4- 11 ).

**ໂອ້ລົມສົນທະນາ**: ແລກປ່ຽນຄວາມຄິດເຫັນໃນຖ້ອຍຄຳທີ່ວ່າ, ***" ເຮົາໄດ້ຮຽນຮູ້ຫຍັງແດ່ຈາກຂໍ້ພຣະຄັມພີໃນຕອນນີ້ ໃນຂະນະທີ່ເຮົາປະເຊີນກັບການຕໍ່ສູ້ໃນຊີວິດເຮົາເອງ?"***

**ໂອ້ລົມສົນທະນາ**: ແລກປ່ຽນຄວາມຄິດເຫັນໃນຖ້ອຍຄຳທີ່ວ່າ, ***" ໃນທາງໃດທີ່ທ່ານມັກສະແດງອອກເຖິງການສັຣເສີນແລະຂອບພຣະຄຸນພຣະເຈົ້າ?"***

## 3. 2 ຂ່າວຄາວ 20:20-23, 29-30:

**ອ່ານພຣະຄຳ**: ໃຫ້ນັກຮຽນຄົນນຶ່ງອາສາສມັກອ່ານພຣະທັມ 2 ຂ່າວຄາວ 20:20-23, 29-30

**ນຳພາ**: ດ້ວຍການເນັ້ນໜັກ, ນຳພານັກຮຽນສຶກສາຖ້ອຍຄຳຂ້າງລຸ່ມນີ້;

ເມື່ອພວກເຮົາເຮັດຕາມຄວາມເຊື່ອຂອງເຮົາໃນພຣະຄຣິດແລະຂອບພຣະຄຸນພຣະອົງ ບໍ່ວ່າເຮົາອາດຈະເຫັນຫຍັງກໍຕາມໃນຂະນະນັ້ນ ເຮົາກໍມີປະສົບການກັບການຊົງສະຖິດຢູ່ນຳຂອງພຣະອົງ, ຣິດອຳນາດ ແລະສັນຕິສຸກ. ປະສົບການນັ້ນເຮັດໃຫ້ເຮົາມີພລັງໃນເທື່ອໜ້າທີ່ເຮົາຈະປະເຊີນກັບການຕໍ່ສູ້. "ເຄັດລັບ" ກໍຄືຊີວິດທີ່ເຕັມໄດ້ວຍການຂອບພຣະຄຸນແມ່ນຊີວິດທີ່ໄວ້ວາງໃນໃນພຣະຄຣິດ.

**<u>ໂອ້ລົມສົນທະນາ</u>**: ແລກປ່ຽນຄວາມຄິດເຫັນໃນຖ້ອຍຄຳທີ່ວ່າ, ***"ການເປັນຄົນມັກຂອບພຣະຄຸນ ຈະນຳໄປສູ່ການເປັນພຍານເພື່ອພຣະຄຣິດ ຢ່າງໃດ?"***

**<u>ນຳພາ</u>**: ຄຣູເວົ້າລົ້ມຄືນ **"ຈຸດສຳຄັນ"** ຢູ່ຂ້າງເທິງໜ້າທຳອິດທີ່ວ່າ **"ພວກເຮົາສາມາດຂອບພຣະຄຸນພຣະເຈົ້າໄດ້ໃນທຸກໆສະຖານະການ."** ຖ້າມີເວລາພໍ ໜູນໃຈນັກຮຽນໃຫ້ແບ່ງປັນຄວາມຄິດເຫັນ ຫລືຖາມຄຳຖາມສຸດທ້າຍ.

## ນຳໃຊ້ໃນຊີວິດ

**ທ່ານຈະດຳລົງຊີວິດຂອງທ່ານໃຫ້ເປັນຊີວິດທີ່ຂອບພຣະຄຸນພຣະເຈົ້າໃນອາທິດນີ້ຢ່າງໃດ? ຈົ່ງພິຈາຣະນາເບິ່ງຄຳແນະນຳນີ້.**

- **ສັຣເສີນ.** ຈັດເວລາໄວ້ໃນແຕ່ລະວັນເພື່ອສັຣເສີນພຣະເຈົ້າທີ່ຊົງອວຍພອນໃນຊີວິດຂອງທ່ານ. ການສັຣເສີນຈະນຳໄປສູ່ການຂອບພຣະຄຸນຫລາຍຂຶ້ນໃນໃຈຂອງທ່ານ.
- **ຈົດເປັນລາຍການ.** ເປັນເຣື່ອງງ່າຍໃນການຈົດລາຍຊື່ສິ່ງດີໆທີ່ເຮົາຂອບພຣະຄຸນໄດ້; ແທນທີ່ຈະເຮັດເຊັ່ນນັ້ນຈົ່ງຈົດລາຍການສິ່ງທີ່ເຮົາຂອບພຣະຄຸນໄດ້ຍາກ. ທາງຂ້າງຂອງແຕ່ລະອັນຈົ່ງຂຽນເຖິງເຫດຜົນວ່າເປັນຫຍັງທ່ານຈຶ່ງຂອບພຣະຄຸນ.
- **ແບ່ງປັນ.** ຈົ່ງເວົ້າອອກມາເພື່ອສະແດງອອກເຖິງການຂອບພຣະຄຸນຂອງທ່ານຕໍ່ຄົນອື່ນຕລອດອາທິດນີ້. ເມື່ອເຫັນວ່າເໝາະສົມ, ຈົ່ງບອກເຖິງການຂອບພຣະຄຸນຂອງທ່ານທີ່ເຊື່ອມຕໍ່ກັບຄວາມໄວ້ວາງໃຈຂອງທ່ານໃນພຣະເຈົ້າຢ່າງໃດ.

"ຂອບພຣະຄຸນໃນທຸກສິ່ງ." ນັ້ນແມ່ນຮາກຖານທີ່ຍອມຮັບ, ເພື່ອຄວາມແນ່ໃຈ. ແຕ່ມັນຍັງເປັນທາງທີ່ຈົບງາມຕໍ່ການດຳເນີນຊີວິດ ແລະຈະສຳເຣັດໄດ້ໂດຍວາງໃຈໃນອົງພຣະຄຣິດໃນທຸກໆ ສິ່ງ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນwww.lsbf.orgແປໂດຍ ພສ**